ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 301 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 31-10-2023

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນ ຂອງ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ລັດຖະດຳລັດ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນ ຂອງ ສປປ ລາວ ສະບັບເລກທີ 082/ປປທ, ລົງວັນທີ 02 ມິຖຸນາ 2023;
- ອີງຕາມ ໜັງສືສະເໜີ ຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 4238/ກຕສ, ລົງວັນທີ 16 ຕຸລາ 2023.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນ ຂອງ ສປປ ລາວ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄົ້ນຄວ້າ, ວາງແຜນ, ຍຸດທະສາດ, ແຜນການ ແລະ ກົນໄກ ຈັດຕັ້ງປະຕິບັດການຫັນເປັນດີຈິຕອນ ຢູ່ ບັນດາກະຊວງ, ອົງການທຽບເທົ່າຢູ່ສູນກາງ ແລະ ບັນດາອົງການປົກຄອງທ້ອງຖິ່ນ, ລວມທັງ ບັນດາອົງການພັກ, ແນວລາວສ້າງຊາດ, ສະພາແຫ່ງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ບົນພື້ນຖານການພັດທະນາລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຫັນເປັນດີຈິຕອນ ຂອງ ສປປ ລາວ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດີຈິຕອນ ຂອງ ສປປ ລາວ ຂຽນເປັນຕົວອັກສອນຫຍໍ້ວ່າ "ຄຊດລ" ຂຽນເປັນພາສາອັງກິດ "Lao National Committee for Digital Transformation - LNCDT" ແມ່ນການຈັດຕັ້ງໜຶ່ງຂອງລັດ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການວາງແນວທາງ, ຍຸດທະສາດ, ກຳນົດນະໂຍບາຍ, ແຜນການ ແລະ ກົນໄກ ໃນການຊີ້ນຳ ຈັດຕັ້ງປະຕິບັດ

ການຫັນເປັນດິຈິຕອນ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຫັນເປັນ ລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ ໃນ ສປປ ລາວ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳ ຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ;
2. ຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ຍຸດທະສາດ, ກົນໄກ ແລະ ນະໂຍບາຍຊຸກຍູ້ສົ່ງເສີມ ການຫັນເປັນດິຈິຕອນຂອງ ສປປ ລາວ, ບົນພື້ນຖານການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ, ສັງຄົມດິຈິຕອນ, ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດຍຸດທະສາດ, ແຜນງານ, ກົນໄກ, ນະໂຍບາຍ, ບັນດາໂຄງການກ່ຽວກັບການຫັນເປັນດິຈິຕອນ, ສ້າງເງື່ອນໄຂສະດວກໃຫ້ແກ່ການຫັນເປັນດິຈິຕອນຂອງ ສປປ ລາວ;
3. ຊີ້ນຳ ແລະ ອອກຄຳແນະນຳ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງລັດ, ເອກະຊົນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ, ແຜນງານ, ກົນໄກ, ບັນດາໂຄງການ ກ່ຽວກັບການຫັນເປັນດິຈິຕອນ, ການພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ, ໂດຍຕິດພັນກັບການພັດທະນາຊັບພະຍາກອນມະນຸດທີ່ມີຄຸນນະພາບສູງ ແລະ ສ້າງພະນັກງານ ລັດຖະກອນ ທີ່ມີທັກສະດິຈິຕອນ;
4. ຕິດຕາມ, ກວດກາ, ຊຸກຍູ້ ແລະ ກຳນົດບູລິມະສິດ ແຜນງານ ແລະ ໂຄງການ ການຈັດຕັ້ງປະຕິບັດວຽກງານການຫັນເປັນດິຈິຕອນ, ບັນດາເນື້ອໃນທີ່ກ່ຽວຂ້ອງກັບ ວິໄສທັດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 10 ປີ (2021-2030) ແລະ ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 5 ປີ (2021-2025);
5. ພົວພັນ, ປຶກສາຫາລື ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ, ແລະ ອົງການຈັດຕັ້ງອື່ນໆ ເພື່ອແລກປ່ຽນບົດຮຽນ ແລະ ຍາດແຍ່ງເອົາການຊ່ວຍເຫຼືອ ເຂົ້າໃນການພັດທະນາວຽກງານການຫັນເປັນດິຈິຕອນ;
6. ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຫັນເປັນດິຈິຕອນ, ປະຕິບັດລະບອບປະຊຸມສາມັນທຸກໆ 6 ເດືອນ ແລະ ກອງປະຊຸມວິສາມັນຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອສະຫຼຸບວາງແຜນ ກຳນົດທິດທາງໜ້າວຽກທີ່ເປັນຈຸດສຸມຂອງການພັດທະນາວຽກງານດິຈິຕອນໃນແຕ່ລະໄລຍະ;
7. ເຂົ້າຮ່ວມກອງປະຊຸມ ກ່ຽວກັບວຽກງານຫັນເປັນດິຈິຕອນ;
8. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 4 ຂອບເຂດສິດ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີຂອບເຂດສິດ ດັ່ງນີ້:

1. ສະເໜີປັບປຸງ, ແກ້ໄຂ, ສ້າງ ຫຼື ຍົກເລີກ ບັນດານະໂຍບາຍ, ກົນໄກ, ແຜນຍຸດທະສາດ, ນິຕິກຳ, ລະບຽບການເຄື່ອນໄຫວ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານການຫັນເປັນດິຈິຕອນ;

2. ມອບໃຫ້ ບັນດາທ່ານ ລັດຖະມົນຕີ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມ ແຫ່ງຊາດ, ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຫົວໜ້າ ຄະນະກຳມະການຫັນເປັນດິຈິຕອນ ຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ ຮັບຜິດຊອບ;
3. ແຕ່ງຕັ້ງຄະນະຊ່ວຍວຽກສະເພາະດ້ານ ເມື່ອເຫັນວ່າມີຄວາມຈຳເປັນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ຂອງແຕ່ລະອະນຸກຳມະການ ຢ່າງຈະແຈ້ງ, ຮັດກຸມ, ຫຼີກເວັ້ນການເຮັດວຽກຊ້ຳຊ້ອນກັບພາກສ່ວນອື່ນ;
4. ປັບປຸງໂຄງປະກອບກົງຈັກການຈັດຕັ້ງຄະນະຊ່ວຍວຽກຂອງຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ;
5. ຮ່ວມມື ແລກປ່ຽນບົດຮຽນ ດ້ານວຽກງານການຫັນເປັນດິຈິຕອນ ກັບບັນດາອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມ;
6. ສະເໜີ ຍ້ອງຍໍ ແລະ ປະຕິບັດນະໂຍບາຍທີ່ເໝາະສົມ ຕໍ່ການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ທີ່ມີຜົນງານປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ພັດທະນາວຽກງານການຫັນເປັນດິຈິຕອນ;
7. ຈັດກອງປະຊຸມສາມັນທຸກໆ 6 ເດືອນ ແລະ ກອງປະຊຸມວິສາມັນ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອສະຫຼຸບວາງແຜນ ກຳນົດທິດທາງໜ້າວຽກທີ່ເປັນຈຸດສຸມຂອງການພັດທະນາວຽກງານດິຈິຕອນໃນແຕ່ລະໄລຍະ;
8. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ປະກອບມີບັນດາກະຊວງທີ່ກ່ຽວຂ້ອງຈຳນວນໜຶ່ງ ແລະ ມີກົງຈັກຊ່ວຍວຽກ ໂດຍແມ່ນ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເສນາທິການ ແລະ ເປັນຫ້ອງການປະຈຳການ, ຢູ່ແຕ່ລະກະຊວງ ແລະ ທ້ອງຖິ່ນ ມີຈຸດປະສານງານ ໂດຍກຳນົດເອົາ ຫົວໜ້າຫ້ອງການ ຫຼື ຕາມການມອບໝາຍ ຂອງບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ໄດ້ຮັບການແຕ່ງຕັ້ງໂດຍລັດຖະດຳລັດ ຂອງ ປະທານປະເທດ ສະບັບເລກທີ 082/ປປທ, ລົງວັນທີ 02 ມິຖຸນາ 2023 ແລະ ມີໂຄງປະກອບບຸກຄະລາກອນ ເຊິ່ງ ທ່ານ ນາຍົກລັດຖະມົນຕີ ເປັນປະທານ, ບັນດາທ່ານຮອງນາຍົກຈຳນວນໜຶ່ງເປັນຮອງປະທານ, ລັດຖະມົນຕີກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຮອງປະທານ ຜູ້ປະຈຳການ ແລະ ບັນດາລັດຖະມົນຕີກ່ຽວຂ້ອງເປັນກຳມະການ.

### ມາດຕາ 7 ຄະນະຊ່ວຍວຽກ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີຄະນະຊ່ວຍວຽກ ເຊິ່ງທ່ານຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຫົວໜ້າຄະນະ, ມີຮອງຫົວໜ້າຄະນະ ແລະ ຄະນະ ທີ່ຖືກແຕ່ງຕັ້ງໂດຍ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງ ຄະນະຊ່ວຍວຽກ**

ຄະນະຊ່ວຍວຽກ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ໄດ້ມີຂໍ້ຕົກລົງລະອຽດສະເພາະຂອງຕົນ ເຊິ່ງ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເປັນເສນາທິການຂອງ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ໃນການຄົ້ນຄວ້າ ແລະ ປະສານງານ ກ່ຽວກັບວຽກງານການຫັນເປັນດິຈິຕອນ ຂອງ ສປປ ລາວ ;
2. ສະເໜີປັບປຸງກົງຈັກບຸກຄະລາກອນຂອງຕົນໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍ;
3. ຂຶ້ນແຜນວຽກ, ແຜນຄົນ ແລະ ແຜນງົບປະມານ, ສະຫຼຸບລາຍງານ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ກ່ຽວກັບຜົນການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນ ໃນແຕ່ລະໄລຍະ;
4. ສະເໜີອອກ ແລະ ປັບປຸງ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ແຜນການເຄື່ອນໄຫວຂອງຄະນະຊ່ວຍວຽກເປັນອັນລະອຽດ ແລະ ຮັບຮອງໂດຍປະທານຜູ້ປະຈໍາການ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ.
5. ປະຕິບັດໜ້າທີ່ ແລະ ນໍາໃຊ້ສິດອື່ນ ຕາມການມອບໝາຍຂອງ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 9 ຫຼັກການ**

ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງສະມາຊິກໃນ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ;
2. ທຸກການເຄື່ອນໄຫວຂອງ ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ແລະ ກົງຈັກຊ່ວຍວຽກ ແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງລັດຖະບານ, ນໍາເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 10 ແບບແຜນວິທີເຮັດວຽກ**

ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ມີແບບແຜນທີ່ທັນສະໄໝ, ມີການປະສານງານສະໜອງຂໍ້ມູນ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ຄະນະກໍາມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ເຄື່ອນໄຫວວຽກງານແບບບໍ່ປະຈໍາການ, ຖືເອົາລະບອບປະຊຸມ 06 ເດືອນ, ປະຈໍາປີ ແລະ ກອງປະຊຸມວິສາມັນ ແຕ່ລະໄລຍະ ເປັນການເຄື່ອນໄຫວວຽກງານເພື່ອເປັນການຕິດຕາມ, ຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ, ວາງທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ, ພ້ອມທັງລາຍງານໃຫ້ລັດຖະບານ ຢ່າງເປັນປົກກະຕິ. ການດໍາເນີນກອງປະຊຸມແຕ່ລະຄັ້ງ ຕ້ອງປະກອບດ້ວຍບຸກຄະລາກອນໃນ

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ເຂົ້າຮ່ວມຫຼາຍກວ່າໜຶ່ງສ່ວນສອງ ຈຶ່ງຈະສາມາດເປີດກອງປະຊຸມໄດ້. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມວິສາມັນຂອງຄະນະຂຶ້ນ;

3. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແນໃສ່ໜູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອວາງແນວທາງ, ຍຸດທະສາດ, ກຳນົດນະໂຍບາຍ, ແຜນການ ແລະ ກົນໄກ ຈັດຕັ້ງປະຕິບັດການຫັນເປັນດິຈິຕອນ ບົນພື້ນຖານການປະຕິຮູບ ແລະ ພັດທະນາລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຫັນເປັນດິຈິຕອນ ຂອງ ສປປ ລາວ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ ແລະ ຕາປະທັບ**

ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ມີຕາປະທັບ ເປັນຂອງຕົນ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍປະຕິບັດຕາມລະບຽບການຂອງລັດ.

ງົບປະມານປະຈຳປີສຳລັບຮັບໃຊ້ການເຄື່ອນໄຫວວຽກງານບໍລິຫານ ຂອງຄະນະກຳມະການລະດັບຊາດເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ແມ່ນໃຫ້ກະຊວງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຂຶ້ນແຜນ ແລະ ນຳສະເໜີລັດຖະບານ.

ງົບປະມານສຳລັບຈັດຕັ້ງປະຕິບັດການຫັນເປັນດິຈິຕອນຢູ່ແຕ່ລະຂະແໜງການ ແມ່ນໃຫ້ແຕ່ລະຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ຂຶ້ນງົບປະມານ ແລະ ໂຄງການ ເພື່ອນຳສະເໜີ ຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ ຮັບຮອງ ແລະ ສະເໜີເຂົ້າໃນແຜນງົບປະມານຕາມລະບຽບການ.

**ມາດຕາ 12 ວັນດິຈິຕອນແຫ່ງຊາດ**

ລັດຖະບານ ກຳນົດເອົາວັນທີ 10.01 (ວັນທີ 10 ເດືອນ ມັງກອນ) ເປັນວັນດິຈິຕອນແຫ່ງຊາດ. ແຕ່ລະປີ ຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມເພື່ອຊຸກຍູ້ສົ່ງເສີມຂະບວນການຫັນເປັນດິຈິຕອນຂອງ ສປປ ລາວ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ບັນດາທ່ານໃນຄະນະກຳມະການລະດັບຊາດ ເພື່ອການຫັນເປັນດິຈິຕອນ ຂອງ ສປປ ລາວ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**